ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0317 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 21 ມີນາ 2022

# ຂໍ້ຕົກລົງ
# ວ່າດ້ວຍ ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ

- ອີງຕາມ ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 0912/ກຂອ, ລົງວັນທີ 10 ມີນາ 2022.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບ ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ມາຍັງ ສປປ ລາວ ເພື່ອເຮັດໃຫ້ວຽກງານດັ່ງກ່າວຖືກຕ້ອງສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

### ມາດຕາ 2 ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ

ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ແມ່ນ ການນຳເອົານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ຈາກຕ່າງປະເທດ ທີ່ມີມາດຕະຖານສອດຄ່ອງກັບມາດຕະຖານແຫ່ງຊາດ ໂດຍຜ່ານດ່ານສາກົນ ເຂົ້າມາ ສປປ ລາວ ດ້ວຍຮູບການນຳເຂົ້າທີ່ເສຍພາສີ-ອາກອນ ຫຼື ນຳເຂົ້າໂດຍໄດ້ຮັບນະໂຍບາຍດ້ານພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ນ້ຳມັນເຊື້ອໄຟ ໝາຍເຖິງ ຜະລິດຕະພັນນ້ຳມັນທີ່ໃຊ້ເພື່ອການເຜົາໄໝ້ ຕາມທີ່ກຳນົດໄວ້ໃນ ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ປະກອບດ້ວຍ ນ້ຳມັນແອັດຊັງ, ນ້ຳມັນກາຊວນ, ນ້ຳມັນກາດ

ເຮືອບິນ, ນ້ຳມັນກາດໄຕ້, ນ້ຳມັນເຕົາ, ນ້ຳມັນເຊື້ອໄຟຊີວະພາບ ແລະ ນ້ຳມັນເຊື້ອໄຟອື່ນ ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ;

2. **ນ້ຳມັນຫຼໍ່ລື່ນ** ໝາຍເຖິງ ຜະລິດຕະພັນນ້ຳມັນທີ່ໃຊ້ເພື່ອຫຼໍ່ລື່ນເຄື່ອງຈັກ ເປັນຕົ້ນ ນ້ຳມັນເຄື່ອງຈັກ, ນ້ຳມັນເກຍ, ນ້ຳມັນຫ້າມລໍ້, ນ້ຳມັນໝຽວ (ກະແລັດ) ແລະ ນ້ຳມັນໄຮໂດຣລິກ;
3. **ບໍລິສັດຈຳໜ່າຍພາຍໃນ** ໝາຍເຖິງ ບໍລິສັດທີ່ເຄື່ອນໄຫວທຸລະກິດກ່ຽວກັບການຊື້ນ້ຳມັນຈາກບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ຜູ້ຜະລິດ ແລະ ປຸງແຕ່ງພາຍໃນປະເທດ ເພື່ອຈຳໜ່າຍໃຫ້ປ້ຳນ້ຳມັນເຊື້ອໄຟ ແລະ ລູກຄ້າຂອງຕົນ ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ມາ ສປປ ລາວ, ຍົກເວັ້ນ ນ້ຳມັນດິບ ແລະ ນ້ຳມັນເຄິ່ງສຳເລັດຮູບ ທີ່ນຳເຂົ້າມາເພື່ອກັ່ນຕອງ ຫຼື ປຸງແຕ່ງ.

## ໝວດທີ 2
## ການນຳເຂົ້ານ້ຳມັນເຊື້ອໄຟ

### ມາດຕາ 5 ຮູບການນຳເຂົ້ານ້ຳມັນເຊື້ອໄຟ

ການນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງດຳເນີນການໂດຍບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ທີ່ໄດ້ເງື່ອນໄຂຕາມດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟເທົ່ານັ້ນ ໂດຍແບ່ງອອກເປັນ ສອງ ຮູບການ ຕາມຈຸດປະສົງຂອງການນຳເຂົ້າ ດັ່ງນີ້:

1. ການນຳເຂົ້ານ້ຳມັນເຊື້ອໄຟ ເພື່ອສະໜອງໃຫ້ ບໍລິສັດຈຳໜ່າຍພາຍໃນ;
2. ການນຳເຂົ້ານ້ຳມັນເຊື້ອໄຟ ເພື່ອສະໜອງໃຫ້ ອົງການຈັດຕັ້ງລັດ, ສະຖານທູດ, ສະຖານກົງສູນ, ອົງການຈັດຕັ້ງສາກົນ, ໂຄງການສຳປະທານ ຫຼື ໂຄງການລົງທຶນ ທີ່ລັດຖະບານອະນຸມັດ ແລະ ໄດ້ຮັບນະໂຍບາຍຍົກເວັ້ນ, ງົດເກັບ ຫຼື ຫຼຸດຜ່ອນ ພາສີ-ອາກອນ ແລະ/ຫຼື ຄ່າທຳນຽມຕ່າງໆ.

### ມາດຕາ 6 ການຂໍອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ

ການຂໍອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ແມ່ນໃຫ້ປະກອບເອກະສານສະເໜີຕໍ່ ກົມການນຳເຂົ້າ ແລະ ສົ່ງອອກ ໂດຍມີເອກະສານປະກອບຕາມແຕ່ລະກໍລະນີ ດັ່ງນີ້:

1. ເອກະສານປະກອບການຂໍອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ຕາມຮູບການທີ 1:
   1) ໜັງສືສະເໜີ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;
   2) ສຳເນົາໃບທະບຽນວິສາຫະກິດ;
   3) ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ;
   4) ແຜນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ປະຈຳປີ ແລະ ປຶ້ມຕິດຕາມການນຳເຂົ້ານ້ຳມັນເຊື້ອໄຟ.
2. ເອກະສານປະກອບການຂໍອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ຕາມຮູບການທີ 2:
   1) ໜັງສືສະເໜີ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;
   2) ສຳເນົາໃບທະບຽນວິສາຫະກິດ;

3) ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ;

4) ແຜນການນຳເຂົ້າປະຈຳປີ (Master List) ແລະ ສຳເນົາຂໍ້ຕົກລົງຮັບຮອງແຜນການນຳເຂົ້າປະຈຳປີ ທີ່ອອກໂດຍກະຊວງທີ່ກ່ຽວຂ້ອງ;

5) ເອກະສານຢັ້ງຢືນກຳນົດເວລານຳໃຊ້ຂອງແຜນການນຳເຂົ້າປະຈຳປີ ທີ່ອອກໃຫ້ໂດຍກະຊວງກ່ຽວຂ້ອງທີ່ເປັນຄູ່ສັນຍາພັດທະນາໂຄງການ ໃນກໍລະນີທີ່ແຜນນຳເຂົ້າປະຈຳປີ (Master List) ບໍ່ໄດ້ກຳນົດເວລາຈັດຕັ້ງປະຕິບັດ.

**ມາດຕາ 7 ການພິຈາລະນາອອກໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງຄົບຖ້ວນ, ກົມການນຳເຂົ້າ ແລະ ສົ່ງອອກ ຕ້ອງພິຈາລະນາອອກໃບອະນຸຍາດນຳເຂົ້າ ພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ.

ກໍລະນີ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ, ຕ້ອງແຈ້ງໃຫ້ຜູ້ສະເໜີຊາບໂດຍທັນທີ ຫຼື ຊ້າສຸດບໍ່ໃຫ້ເກີນສາມສິບ ນາທີ ເພື່ອແນະນຳໃຫ້ໄປປັບປຸງແກ້ໄຂ.

ກໍລະນີ ບໍ່ສາມາດອອກໃບອະນຸຍາດໄດ້, ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຖືກຕ້ອງຄົບຖ້ວນ.

**ມາດຕາ 8 ອາຍຸການນຳໃຊ້ ແລະ ການດັດແກ້ໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ**

ໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ມີອາຍຸການນຳໃຊ້ ຮອດວັນທີ 31 ທັນວາ ຂອງປີທີ່ອອກໃບອະນຸຍາດເທົ່ານັ້ນ ແລະ ບໍ່ສາມາດຕໍ່ອາຍຸການນຳໃຊ້ໄດ້.

ໃນກໍລະນີ ຕ້ອງການດັດແກ້ເນື້ອໃນຂອງໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ, ໃຫ້ປະກອບເອກະສານຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ຕາມແຕ່ລະກໍລະນີ ພ້ອມຄັດຕິດໃບອະນຸຍາດນຳເຂົ້າສະບັບຕົ້ນ ຍື່ນຕໍ່ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອພິຈາລະນາ.

**ມາດຕາ 9 ພັນທະການລາຍງານສະຖິຕິການນຳເຂົ້ານ້ຳມັນເຊື້ອໄຟ**

ຜູ້ນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງເກັບກຳສະຖິຕິ ແລະ ສະຫຼຸບລາຍງານຂໍ້ມູນການນຳເຂົ້ານ້ຳມັນເຊື້ອໄຟ ຕົວຈິງຂອງແຕ່ລະເດືອນ ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ.

## ໝວດທີ 3
## ການນຳເຂົ້ານ້ຳມັນຫຼໍ່ລື່ນ

**ມາດຕາ 10 ການນຳເຂົ້ານ້ຳມັນຫຼໍ່ລື່ນ**

ຜູ້ນຳເຂົ້ານ້ຳມັນຫຼໍ່ລື່ນ ທີ່ມີເງື່ອນໄຂຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ທີ່ມີຈຸດປະສົງນຳເຂົ້ານ້ຳມັນຫຼໍ່ລື່ນ ເພື່ອມາຈຳໜ່າຍ ຫຼື ນຳໃຊ້ໂດຍກົງເຂົ້າໃນການບໍລິການຫຼັງການຂາຍ ແມ່ນສາມາດດຳເນີນຂັ້ນຕອນການແຈ້ງເສຍພາສີໄດ້ເລີຍ ໂດຍບໍ່ຈຳເປັນຕ້ອງຂໍໃບອະນຸຍາດນຳເຂົ້ານ້ຳມັນຫຼໍ່ລື່ນຈາກກະຊວງອຸດສາຫະກຳ ແລະ ການຄ້າ.

ສຳລັບການນຳເຂົ້ານ້ຳມັນຫຼໍ່ລື່ນທີ່ໄດ້ຮັບນະໂຍບາຍດ້ານພາສີ-ອາກອນ ແລະ ພັນທະອື່ນ ໂດຍຖືກຕ້ອງສອດຄ່ອງກັບກົດໝາຍ ແມ່ນສາມາດດຳເນີນຂັ້ນຕອນການແຈ້ງເສຍພາສີໄດ້ເລີຍ ໂດຍຜູ້ນຳເຂົ້າທີ່ໄດ້ເງື່ອນໄຂຕາມມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ແລະ ບໍ່ຈຳເປັນຕ້ອງຂໍໃບອະນຸຍາດນຳເຂົ້ານ້ຳມັນຫຼໍ່ລື່ນຈາກກະຊວງອຸດສາຫະກຳ ແລະ ການຄ້າ, ແຕ່ນ້ຳມັນຫຼໍ່ລື່ນດັ່ງກ່າວຕ້ອງໄດ້ສັງລວມ ແລະ ບັນທຶກເຂົ້າໃນລະບົບຄຸ້ມຄອງແຜນນຳເຂົ້າ ຕາມລະບຽບການທີ່ກະຊວງການເງິນວາງອອກໃນແຕ່ລະໄລຍະ.

**ມາດຕາ 11 ເງື່ອນໄຂຜູ້ນໍາເຂົ້ານໍ້າມັນຫຼໍ່ລື່ນ**

ຜູ້ນໍາເຂົ້ານໍ້າມັນຫຼໍ່ລື່ນ ຕ້ອງມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ເປັນບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ທີ່ໄດ້ເງື່ອນໄຂຕາມດໍາລັດວ່າດ້ວຍທຸລະກິດນໍ້າມັນເຊື້ອໄຟ;
2. ໄດ້ຮັບອະນຸຍາດດໍາເນີນກິດຈະການທຸລະກິດການຄ້າຂາຍຍົກ-ຂາຍຍ່ອຍນໍ້າມັນຫຼໍ່ລື່ນ ຢ່າງຖືກຕ້ອງ ຕາມເງື່ອນໄຂ ທີ່ກໍານົດໄວ້ໃນ ຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;
3. ມີໃບອະນຸຍາດດໍາເນີນທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ກໍລະນີນໍາເຂົ້າ ເພື່ອນໍາໃຊ້ໂດຍກົງໃນການບໍລິການຫຼັງການຂາຍ.

## ໝວດທີ 4
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟ

**ມາດຕາ 12 ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມການນໍາເຂົ້າ ແລະ ສົ່ງອອກ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງ ກົມການນໍາເຂົ້າ ແລະ ສົ່ງອອກ**

ກົມການນໍາເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນິຕິກໍາ ກ່ຽວກັບການຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟ ແລະ ນໍ້າມັນຫຼໍ່ລື່ນ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່, ແນະນໍາ ແລະ ອໍານວຍຄວາມສະດວກ ໃນແຕ່ລະຂັ້ນຕອນຂອງການນໍາເຂົ້າ ບົນພື້ນຖານ ຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ນິຕິກໍາ ທີ່ວາງອອກໃນແຕ່ລະໄລຍະ;
3. ຮັບຮອງແຜນການນໍາເຂົ້ານໍ້າມັນເຊື້ອໄຟ ແລະ ນໍ້າມັນຫຼໍ່ລື່ນ ປະຈໍາປີ;
4. ພິຈາລະນາ ອອກ, ໂຈະ, ລົບລ້າງ ໃບອະນຸຍາດການນໍາເຂົ້ານໍ້າມັນເຊື້ອໄຟ;
5. ຕິດຕາມ, ສະຫຼຸບລາຍງານ ສະພາບ ແລະ ບັນຫາການນໍາເຂົ້ານໍ້າມັນເຊື້ອໄຟ ແລະ ນໍ້າມັນຫຼໍ່ລື່ນ ໃນຂອບເຂດທົ່ວປະເທດ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງຕິດຕາມ ແລະ ກວດກາ ການນໍາເຂົ້ານໍ້າມັນເຊື້ອໄຟ ແລະ ນໍ້າມັນຫຼໍ່ລື່ນ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນໍາ ກ່ຽວກັບລະບຽບການ ແລະ ຂັ້ນຕອນການນໍາເຂົ້ານໍ້າມັນເຊື້ອໄຟ ແລະ ນໍ້າມັນຫຼໍ່ລື່ນ ທີ່ວາງອອກໃນແຕ່ລະໄລຍະ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຊາບຢ່າງທົ່ວເຖິງ;

2. ຕິດຕາມ ແລະ ລາຍງານ ສະພາບ ແລະ ບັນຫາການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ຕາມການມອບໝາຍ ຂອງຂັ້ນເທິງຢ່າງເປັນປົກກະຕິ;
3. ເປັນເຈົ້າການ ຫຼື ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ລົງຕິດຕາມ ແລະ ກວດກາ ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ຕາມການມອບໝາຍຂອງ ຂັ້ນເທິງ;
4. ຄົ້ນຄວ້າ ແລະ ນຳສະເໜີ ຂັ້ນເທິງ ພິຈາລະນາມາດຕະການໃນການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ໃຫ້ສະດວກ, ຮັບປະກັນ ແລະ ສອດຄ່ອງກັບລະບຽບກົດໝາຍ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ກ່ຽວກັບລະບຽບການ ແລະ ຂັ້ນຕອນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢູ່ໃນເມືອງ, ນະຄອນ ຂອງຕົນຊາບ ຢ່າງທົ່ວເຖິງ;
2. ຕິດຕາມ ແລະ ລາຍງານ ສະພາບ ແລະ ບັນຫາການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ຕາມການມອບໝາຍ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ເຂົ້າຮ່ວມໃນການລົງຕິດຕາມ ແລະ ກວດກາ ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ຕາມການມອບໝາຍ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ນຳໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ຢູ່ ສປປ ລາວ ສະບັບເລກທີ 0237/ອຄ.ກຂອ, ລົງວັນທີ 02 ກຸມພາ 2012.

ລັດຖະມົນຕີ

ປອ. ຄຳແພງ ໄຊສົມແພງ